ວາລະສານ

# ກະສິກຳ ແລະ ປ່າໄມ້

ປະຈຳ ອາທິດວັນທີ 24 ຫາ 28 ມິຖຸນາ 2024



ພິທີເປີດນຳໃຊ້ໂຄງການທາງຜ່ານປາ ນ້ຳມອນ ແລະ ນ້ຳກວາງ 2

ຫ້ອງການກະຊວງກະສິກຳ ແລະ ປ່າໄມ້



# ພິທີເປີດນຳໃຊ້ໂຄງການທາງຜ່ານປາ ນ້ຳມອນ ແລະ ນ້ຳກວາງ 2

ພາບ-ຂ່າວ ໂດຍ: ພະແນກ ໂຄສະນາ ແລະ ຂ່າວສານ

ພິທີເປີດການນຳໃຊ້ໂຄງການທາງຜ່ານປາ ນ້ຳມອນ ບ້ານ ນ້ຳມອນ ແລະ ແລະ ທາງຜ່ານປາ ນ້ຳກວາງ 2 ບ້ານ ນາຄູນ ເມືອງວັງວຽງ, ແຂວງວຽງຈັນ ໄດ້ຈັດຂຶ້ນໃນວັນທີ 21 ມິຖຸນາ 2024 ໂດຍການເປັນປະທານ ຂອງ ທ່ານ ຄຳພັນ ສິດທິດຳພາ ເຈົ້າແຂວງໆວຽງຈັນ. ເຂົ້າຮ່ວມມີ ທ່ານ ຣສ. ປອ. ອຸດົມ ພອນຄຳເພັງ ອະດີດອະທິການບໍດີ ມະຫາວິທະຍາໄລແຫ່ງຊາດ, ທ່ານ ນ. ເມແກນ ໂຈນ ເອກອັກຄະລັດຖະທູດອົດສະຕຣາລີ ປະຈຳລາວ ໂດຍມີຮອງຫົວໜ້າກົມ ຈາກກະຊວງກະສິກຳ ແລະ ປ່າໄມ້, ທ່ານເຈົ້າເມືອງໆວັງວຽງ, ທີມງານຮັບຜິດຊອບໂຄງການ ພ້ອມດ້ວຍພາກສ່ວນທີ່ກ່ຽວຂ້ອງເຂົ້າຮ່ວມຢ່າງເປັນຂະບວນ.

ທ່ານ ປອ. ຄຳຣູ້ ພັນທະວົງ ຫົວໜ້າພະແນກຄຸ້ມຄອງເຕັກນິກຊົນລະປະທານ, ກົມຊົນລະປະທານ ໄດ້ລາຍງານປະຫວັດຄວາມເປັນມາຂອງໂຄງການວ່າ: ໂຄງການທາງຜ່ານປາ ນ້ຳມອນ ແລະ ນ້ຳກວາງ 2 ໄດ້ຮັບການສະໜັບສະໜູນຊ່ວຍເຫຼືອທາງດ້ານວິຊາການ ແລະ ດ້ານການເງິນຈາກລັດຖະບານອົດສະຕຣາລີ. ຊຶ່ງໄດ້ເລີ່ມຈັດຕັ້ງປະຕິບັດການກໍ່ສ້າງ ແຕ່ເດືອນ ພະຈິກ 2023 ແລະໄດ້ສຳເລັດການກໍ່ສ້າງ ໃນເດືອນ ພຶດສະພາ 2024 ທັງ 2 ໂຄງການ ລວມມູນຄ່າການກໍ່ສ້າງ 350.248 ໂດລາສະຫະລັດ. ຈຸດປະສົງຂອງໂຄງການດັ່ງກ່າວນີ້ ແມ່ນເພື່ອເປັນບ່ອນສາທິດທົດລອງ ແລະຮຽນຮູ້ ກ່ຽວກັບເຕັກນິກວິຊາການທີ່ເໝາະສົມ ໃນ

ການກໍ່ສ້າງທາງຜ່ານປາ ຕິດພັນກັບວຽກງານຊົນລະປະທານ, ເປັນການເສີມຂະຫຍາຍຂີດຄວາມສາມາດ ທັງເປັນການຍົກລະດັບຄວາມຮູ້ ຄວາມສາມາດປະສົບການຂອງພະນັກງານວິຊາການລາວ ກ່ຽວກັບວຽກງານການກໍ່ສ້າງທາງຜ່ານປາຕິດພັນກັບວຽກງານຊົນລະປະທານຢູ່ ສປປ ລາວ. ນອກຈາກນີ້, ທັງສອງໂຄງການຍັງຖືວ່າເປັນໜຶ່ງໃນບັນດາໂຄງການສາທິດທົດລອງ ວຽກງານທາງຜ່ານປາ ທີ່ມີປະສິດທິພາບ ແລະ ປະສິດທິຜົນສູງ ຊຶ່ງຈະຊ່ວຍໃຫ້ຊຸມຊົນທີ່ອາໃສຢູ່ເຂດນີ້ມີລາຍຮັບເພີ່ມຂຶ້ນຈາກການຫາປາ ແລະ ເຮັດໃຫ້ມີຄວາມຫຼາກຫຼາຍອຸດົມສົມບູນທາງດ້ານຊີວະນາໆພັນ ໂດຍສະເພາະແມ່ນປາໃນເຂດນີ້. ເພື່ອເຮັດໃຫ້ພິທີດັ່ງກ່າວມີຄວາມຄວາມໝາຍສຳຄັນ ປະທານພິທີ ໄດ້ພ້ອມກັນ ຕັດແຖບຜ້າ ເພື່ອເປີດການນຳໃຊ້ທາງຜ່ານປາ ຂອງທັງສອງແຫ່ງຢ່າງເປັນທາງການ ພ້ອມນີ້ ໄດ້ລົງຢ້ຽມຊົມພື້ນທີ່ຈັດຕັ້ງປະຕິບັດໂຄງການຕື່ມອີກ.




<u>ຄະນະຮັບຜິດຊອບ:</u>
ທ່ານ ສີປະໄພ ໄຊສົງຄາມ
ທ່ານ ສີສະຫວາດ ທອນດາລາ

<u>ບັນນາທິການ:</u>
ທ່ານ ກິດຊະນະ ພົມມະຈັນ
ທ່ານ ໂຊລາ ສົມມະລາວົງ
ທ່ານ ນ. ທອງພຸດ ວົງພະຈັນ
ທ່ານ ນ. ຄຳແພງ ເກສອນ

<u>ຈັດໜ້າອອກແບບໂດຍ:</u>
ທ່ານ ນ. ສີອຳນອນ ໄຊຍະລາດ

<u>ຕິດຕໍ່ ແລະ ລົງໂຄສະນາໄດ້ທີ່:</u> ພະແນກໂຄສະນາ ແລະ ຂ່າວສານ, ຫ້ອງການກະຊວງ 021 410154;
website: www.maf.gov.la;
Facebook: ຂ່າວສານກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ;
Youtube: ລາຍການກະສິກຳ;ແລະ ປ່າໄມ້;